Old Capitol Building
PO Box 47200
Olympia, WA 98504-7200

k12.wa.us

Washington Office of Superintendent of
**PUBLIC INSTRUCTION**
Chris Reykdal, Superintendent

# ຄຳຮ້ອງຂໍສຳລັບການຮ້ອງຮຽນຕໍ່ຊຸມຊົນການສຶກສາພິເສດ (Special Education Community Complaint, SECC)

(ໃຊ້ແບບຟອມອື່ນ ເພື່ອຍື່ນສຳລັບ ຂະບວນການທາງກົດໝາຍ)

ແບບຟອມນີ້ແມ່ນບໍ່ບັງຄັບໃຫ້ຕ້ອງໃຊ້. ຫ້ອງການຂອງພວກເຮົາຈະນຳໃຊ້ຂໍ້ມູນທີ່ທ່ານສະໜອງໃຫ້ ເພື່ອພິຈາລະນາການຮ້ອງຮຽນຂອງທ່ານ. ສຳລັບຂໍ້ມູນເພີ່ມຕື່ມກ່ຽວກັບຂະບວນການ IEP (Individualized Education Program, ໂຄງການຂອງການສຶກສາສ່ວນບຸກຄົນ) ແລະ ສິດຂອງນັກຮຽນ/ຄອບຄົວ, ໃຫ້ເບິ່ງ OSPI (Office of Superintendent of Public Instruction, ຫ້ອງການຫົວໜ້າຄຸ້ມຄອງການສອນສາທາລະນະ), ເວັບໄຊການແກ້ໄຂຂໍ້ຂັດແຍ່ງດ້ານການສຶກສາພິເສດ.

| | |
|---|---|
| **ສົ່ງເຖິງ:** Dr. Tania May<br>Assistant Superintendent<br>OSPI, Special Education<br>PO Box 47200<br>Olympia, WA 98504-7200<br>ແຟັກ: 360-586-0247<br>speced@k12.wa.us<br><br>ວັນທີສົ່ງ: ______________________ | **ຍັງສົ່ງເຖິງ:** ຜູ້ອຳນວຍການການສຶກສາພິເສດຂອງເຂດການສຶກສາ ແລະ/ຫຼື ຫົວໜ້າເຂດການສຶກສາ. ຂໍ້ມູນຕິດຕໍ່ສຳລັບເຂດການສຶກສາແມ່ນສາມາດຫາໄດ້ຢູ່ໃນ ສະໝຸດລາຍຊື່ການສຶກສາພິເສດ.<br><br>ສຳເນົາການຮ້ອງຮຽນນີ້ ສາມາດສະໜອງໃຫ້ຜ່ານທາງອີເມວ, ແຟັກ, ຫຼື ອັດສຳເນົາເປັນເອກະສານ.<br>ທາງລຸ່ມນີ້, ກະລຸນາລະບຸຊື່ໜ່ວຍງານສາທາລະນະ/ເຂດໂຮງຮຽນ ແລະ ການສຳເນົາແມ່ນສະໜອງໃຫ້.<br><br>______________________<br>______________________<br>______________________<br>ວັນທີສົ່ງ: ______________________ |

## ຄຳແນະນຳກ່ຽວກັບ ການຮ້ອງຮຽນຕໍ່ຊຸມຊົນການສຶກສາພິເສດ Special Education Community Complaint, SECC)

ສຳລັບການຊ່ວຍເຫຼືອໃນການຕື່ມຂໍ້ມູນໃສ່ແບບຟອມນີ້ ຫຼື ເພື່ອຮ້ອງຂໍຮູບແບບທີ່ທ່ານສາມາດເຂົ້າເຖິງໄດ້ຫຼາຍກວ່ານີ້, ກະລຸນາຕິດຕໍ່ Office of Superintendent of Public Instruction, Special Education Division (ຫ້ອງການຫົວໜ້າຄຸ້ມຄອງການສິດສອນສາທາລະນະ, ຂະແໜງການສຶກສາພິເສດ) ທີ່ເບີ 360-725-6075 ຫຼື speced@k12.wa.us.

**ທ່ານຕ້ອງສົ່ງສຳເນົາຄຳຮ້ອງຮຽນຂອງທ່ານໄປຍັງ OSPI ແລະ ໂຮງຮຽນ/ໜ່ວຍງານ ໃນເວລາດຽວກັນ.** ທ່ານສາມາດຊອກຫາຂໍ້ມູນການຕິດຕໍ່ຂອງໂຮງຮຽນ / ອົງການຈັດຕັ້ງຢູ່ໃນ ສະໝຸດລາຍຊື່ການສຶກສາພິເສດ.

**ຄຳຮ້ອງຮຽນຂອງທ່ານຕ້ອງມີລາຍເຊັນຂອງທ່ານ.** ກົດລະບຽບສຳລັບການສຶກສາພິເສດຂອງ Washington ແລະ IDEA (Individuals with Disabilities Education Act, ກົດໝາຍວ່າດ້ວຍການສຶກສາຄົນພິການ) ກຳນົດໃຫ້ຕ້ອງໄດ້ລົງລາຍເຊັນ.

**ຄຳຮ້ອງຮຽນຂອງທ່ານຕ້ອງມີລາຍເຊັນຂອງທ່ານ ແລະ ຂໍ້ມູນຕິດຕໍ່ຂອງທ່ານ.** ຈຳເປັນຕ້ອງລະບຸຊື່ ແລະ ຂໍ້ມູນຕິດຕໍ່ຂອງຜູ້ປົກຄອງ ຫຼື ຜູ້ຮ້ອງຮຽນ. ຊື່ຂອງນັກຮຽນ, ຖ້າວ່າການຮ້ອງຮຽນແມ່ນສະເພາະກັບນັກຮຽນ ແລະ ຂໍ້ມູນຕິດຕໍ່ ຖ້າວ່ານັກຮຽນບໍ່ມີທີ່ຢູ່ອາໄສ.

CC BY ແບບຟອມຄຳຮ້ອງຂໍການຮ້ອງຮຽນຕໍ່ຊຸມຊົນການສຶກສາພິເສດ ໂດຍ Office of Superintendent of Public Instruction (ຫ້ອງການຫົວໜ້າຄຸ້ມຄອງການສິດສອນສາທາລະນະ) ແມ່ນໄດ້ຮັບການອະນຸຍາດພາຍໃຕ້ ໃບອານຸຍາດທີ່ມາຈາກ Creative Commons.

**<u>ພາກທີ I:  ຂໍ້ມູນນັກສຶກສາ</u>**
**<u>(ໃຊ້ສຳລັບການຮ້ອງຮຽນທີ່ກ່ຽວຂ້ອງກັບນັກສຶກສາຄົນໃດຄົນໜຶ່ງໂດຍສະເພາະ)</u>**

OSPI ພະຍາຍາມສຳລັບການບູລະນາການ ແລະ ແນວທາງການປະຕິບັດທີ່ປິດຊ່ອງຫວ່າງທາງໂອກາດ. ຖ້າທ່ານສະໝັກໃຈໃຫ້ຂໍ້ມູນກ່ຽວກັບສະພາວະຄວາມພິການ, ເຊື້ອຊາດ ແລະເພດຂອງລູກທ່ານ, ຂໍ້ມູນທີ່ເປັນຄວາມລັບຂອງທ່ານຈະຖືກນຳໃຊ້ເພື່ອລະບຸທ່າອ່ຽງໂດຍລວມໃນລັດຂອງພວກເຮົາ ແລະ ເພື່ອປັບປຸງຄຳແນະນຳ ແລະ ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງຂອງ OSPI ເທົ່ານັ້ນ. *ຖ້າການຮ້ອງຮຽນແມ່ນກ່ຽວກັບນັກຮຽນຫຼາຍກວ່າໜຶ່ງຄົນ, ກະລຸນາໃຊ້ໜ້າເຈ້ຍເພີ່ມເຕີມ.*

| | | |
|---|---|---|
| ຊື່ຂອງນັກຮຽນ | ສະຖານະພາບຄວາມພິການຂອງນັກຮຽນ (ບໍ່ໃສ່ກໍໄດ) | ຂັ້ນຮຽນ, ເຊື້ອຊາດ/ຊົນເຜົ່າ, ເພດ (ບໍ່ໃສ່ກໍໄດ້) |
| ໜ່ວຍງານພາກລັດ (ຈຳເປັນ) | ຊື່ໂຮງຮຽນ (ບໍ່ໃສ່ກໍໄດ້) | |

**<u>ພາກທີ II:  ຂໍ້ມູນຜູ້ຮ້ອງຮຽນ</u>**

| | |
|---|---|
| ຊື່ | ພາສາຫຼັກ (ບໍ່ໃສ່ກໍໄດ້) |
| ທີ່ຢູ່ຖະໜົນ | ໂໝດການສື່ສານທີ່ຕ້ອງການ (ບໍ່ໃສ່ກໍໄດ້) |
| ເມືອງ/ລັດ/ລະຫັດໄປສະນີ | ເຊື້ອຊາດ/ຊົນເຜົ່າ, ເພດ (ບໍ່ໃສ່ກໍໄດ້) |
| ຂໍ້ມູນຕິດຕໍ່: ໂທລະສັບ ຫຼື ອີເມວ | **ຄວາມສຳພັນກັບນັກຮຽນ (ພໍ່ແມ່/ຜູ້ປົກຄອງ/ອື່ນໆ) (ບໍ່ໃສ່ກໍໄດ້)** |
| **X ລົດຂອງທ່ານ** | **ວັນທີ** |

## ພາກທີ III:  ຂໍ້ກ່າວຫາ – ສິ່ງທີ່ທ່ານເຊື່ອວ່າໂຮງຮຽນໄດ້ເຮັດຜິດພາດໄປ ແມ່ນມີຫຍັງແດ່?

**ກ. ຄຳຖະແຫຼງຂອງທ່ານກ່ຽວກັບການລະເມີດທີ່ຖືກກ່າວຫາ:**

ທ່ານບໍ່ຈຳເປັນຕ້ອງຮູ້ວ່າມີການລະເມີດກົດໝາຍໃດ, ແຕ່ທ່ານຕ້ອງໄດ້ອະທິບາຍເຖິງສິ່ງທີ່ທ່ານເຊື່ອວ່າໂຮງຮຽນໄດ້ເຮັດຜິດພາດໄປ ເຊັ່ນ: "ຄູອາຈານບໍ່ໄດ້ປະຕິບັດຕາມ IEP ຂອງລູກຂອງຂ້າພະເຈົ້າ." ກະລຸນາຄັດຕິດເຈ້ຍເພີ່ມໃສ່ ຖ້າທ່ານຕ້ອງການພື້ນທີ່ເພີ່ມເຕີມເພື່ອຂຽນ. OSPI ພຽງແຕ່ອາດຈະສືບສວນການກ່າວຫາດ້ານການສຶກສາພິເສດທີ່ເກີດຂຶ້ນພາຍໃນໜຶ່ງປີ ນັບຈາກວັນທີໄດ້ຮັບການຮ້ອງຮຽນຂອງທ່ານ. ຕົວຢ່າງ: ຖ້າພວກເຮົາໄດ້ຮັບຄຳຮ້ອງຮຽນໃນວັນທີ 1 ຕຸລາ 2021, ພວກເຮົາສາມາດສືບສວນໄດ້ໃນຊ່ວງໄລຍະເວລາເລີ່ມແຕ່ວັນທີ 2 ຕຸລາ 2020.

| **ຂ້າພະເຈົ້າເຊື່ອວ່າໂຮງຮຽນໄດ້ລະເມີດຂໍ້ກຳນົດດ້ານການສຶກສາພິເສດ ໂດຍ:** |
|---|
| |

**ຂ. ຂໍ້ເທັດຈິງກ່ຽວກັບຂໍ້ກ່າວຫາຂອງທ່ານ:**

ກະລຸນາລະບຸວັນທີ, ເວລາ ແລະ ລາຍລະອຽດຂໍ້ມູນອື່ນໆທີ່ກ່ຽວຂ້ອງກ່ຽວກັບສິ່ງທີ່ເກີດຂຶ້ນ.

**ຄ. ເອກະສານທີ່ສະໜັບສະໜູນຂໍ້ກ່າວຫາຂອງທ່ານແມ່ນມີຫຍັງແດ່? (ບໍ່ໃສ່ກໍໄດ້)**

ຈົດໝາຍຈາກໂຮງຮຽນ, ການປະເມີນຜົນນັກຮຽນ ແລະ IEP, ແຈ້ງການຕ່າງໆ ແລະ ເອກະສານອື່ນໆ ອາດຈະຊ່ວຍສະແດງໃຫ້ເຫັນວ່າໄດ້ເກີດຫຍັງຂຶ້ນ ແລະ ສິ່ງທີ່ທ່ານເຊື່ອວ່າໂຮງຮຽນໄດ້ເຮັດຜິດພາດລົງໄປ. ເຖິງແມ່ນວ່າທ່ານຈະໄດ້ຮັບການສະໜັບສະໜູນໃຫ້ຄັດຕິດກັບເອກະສານເຫຼົ່ານີ້, ແຕ່ກໍບໍ່ແມ່ນຂໍ້ບັງຄັບ.

**ງ. ສິ່ງທີ່ທ່ານຢາກຈະໃຫ້ເກີດຂຶ້ນ ແມ່ນມີຫຍັງແດ່?**

ກະລຸນາອະທິບາຍວ່າທ່ານຕ້ອງການດຳເນີນການຄືແນວໃດ ຫຼື ຕ້ອງການວິທີການແກ້ໄຂຄືແນວໃດ ຖ້າວ່າ OSPI ຕັດສິນໃຈວ່າໂຮງຮຽນໄດ້ລະເມີດສິດທິຂອງນັກຮຽນ.

## ຂໍ້ມູນການຮ້ອງຮຽນຕໍ່ຊຸມຊົນການສຶກສາພິເສດ

**ເລື່ອງນີ້ກ່ຽວຂ້ອງກັບສິ່ງອື່ນ ນອກເໜືອຈາກການບໍລິການການສຶກສາພິເສດບໍ?**
ຖ້າການຮ້ອງຮຽນຂອງທ່ານກ່ຽວຂ້ອງກັບການຈຳແນກ ຫຼື ສິດຂອງນັກຮຽນພາຍໃຕ້ມາດຕາ 504 ຂອງ Rehabilitation Act (ກົດໝາຍວ່າດ້ວຍການຟື້ນຟູ), ກະລຸນາຕິດຕໍ່ Office for Civil Rights (ຫ້ອງການສິດທິພົນລະເຮືອນ) ທີ່ເບີ 1-800-421-3481 ຫຼື Equity & Civil Rights Office (ຫ້ອງການຄວາມເທົ່າທຽມ ແລະ ສິດທິພົນລະເຮືອນ) ຂອງ OSPI ທີ່ເບີ 360-725-6162. ຄຳຖາມກ່ຽວກັບການປະພຶດທາງວິຊາຊີບ ຄວນຖາມໂດຍກົງໄປຫາ Office of Professional Practices (ຫ້ອງການຄຸ້ມຄອງແນວທາງປະຕິບັດທາງວິຊາຊີບ, OPP) ທີ່ເບີ 360-725-6130.

**ຂໍ້ມູນທີ່ໄດ້ແບ່ງປັນໃນລະຫວ່າງການສືບສວນການຮ້ອງຮຽນ**
ລະບຽບການກ່ຽວກັບການສຶກສາພິເສດຂອງ Washington ກຳນົດໃຫ້ OSPI ແບ່ງປັນເອກະສານທຸກຢ່າງທີ່ເຂດການສຶກສາໄດ້ສະໜອງໃຫ້ແກ່ພໍ່ແມ່/ຜູ້ຮ້ອງຮຽນ ແລະ ຂໍ້ມູນທຸກຢ່າງທີ່ພໍ່ແມ່/ຜູ້ຮ້ອງຮຽນໄດ້ແບ່ງປັນໃຫ້ແກ່ເຂດການສຶກສາໃນນາມເປັນສ່ວນໜຶ່ງຂອງການສືບສວນ. ຖ້າຜູ້ຮ້ອງຮຽນບໍ່ແມ່ນພໍ່ແມ່/ຜູ້ປົກຄອງຂອງນັກຮຽນທີ່ມີລາຍຊື່ຢູ່ໃນຄຳຮ້ອງຮຽນ, OSPI ກຳນົດໃຫ້ຕ້ອງມີການເປີດເຜີຍຂໍ້ມູນທີ່ລົງລາຍເຊັນໃສ່ໂດຍພໍ່ແມ່, ກ່ອນທີ່ຈະສາມາດແບ່ງປັນຂໍ້ມູນໃດໜຶ່ງທີ່ສາມາດລະບຸຕົວຕົນໄດ້ກ່ຽວກັບນັກຮຽນ. ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບຂະບວນການຮ້ອງຮຽນ, ໃຫ້ເບິ່ງ: ພາບລວມກ່ຽວກັບຂະບວນການຮ້ອງຮຽນ.

**ຂໍ້ມູນດ້ານປະຊາກອນ**
OSPI ພະຍາຍາມສຳລັບການບູລະນາການ ແລະ ແນວທາງການປະຕິບັດທີ່ປິດຊ່ອງຫວ່າງທາງໂອກາດ. ຖ້າທ່ານສະໝັກໃຈໃຫ້ຂໍ້ມູນກ່ຽວກັບສະພາວະຄວາມພິການຂອງລູກຂອງທ່ານ, ເຊື້ອຊາດ ແລະ ຊົນເຜົ່າຂອງສະມາຊິກໃນຄອບຄົວຂອງທ່ານ ແລະ ຮູບປະພັນທາງເພດຂອງນັກຮຽນຂອງທ່ານ, ພວກເຮົາຈະຮັກສາຂໍ້ມູນທີ່ເປັນຄວາມລັບຂອງທ່ານໄວ້ເປັນສ່ວນຕົວ ແລະ ນຳໃຊ້ມັນເພື່ອລະບຸແນວໂນ້ມໃນລັດຂອງພວກເຮົາເທົ່ານັ້ນ. ພວກເຮົາໃຊ້ຂໍ້ມູນນີ້ແບບລວມໆ, ໂດຍບໍ່ມີການເຊື່ອມໂຍງກັບນັກຮຽນ ຫຼື ຄອບຄົວເປັນລາຍບຸກຄົນ ເພື່ອປັບປຸງຄຳແນະນຳຂອງພວກເຮົາ ສຳລັບບັນດາໂຮງຮຽນໃນ Washington ແລະ ເພື່ອປັບປຸງຂະບວນການຂອງພວກເຮົາທີ່ສະໜັບສະໜູນສິດຂອງນັກຮຽນ ແລະ ຄອບຄົວ.

ໂດຍລວມແລ້ວ, OSPI ຈະບໍ່ແບ່ງປັນຂໍ້ມູນ (ເຊັ່ນ: ອີເມວ ແລະ ເອກະສານກ່ຽວກັບການສຶກສາພິເສດ) ທີ່ໄດ້ສະໜອງໃຫ້ແກ່ OSPI ໃນລະຫວ່າງຂະບວນການສືບສວນຂອງ ການຮ້ອງຮຽນຕໍ່ຊຸມຊົນການສຶກສາພິເສດ (Special Education Community Complaint, SECC) ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ໜ່ວຍງານອື່ນໆຂອງລັດຖະບານກາງ ຫຼື ລັດ.

ສະມາຊິກຈາກສາທາລະນະອາດຈະສາມາດຮ້ອງຂໍເຂົ້າເຖິງຂໍ້ມູນດັ່ງກ່າວໄດ້ພາຍໃຕ້ Public Records Act (ກົດໝາຍວ່າດ້ວຍບັນທຶກສາທາລະນະ) ຂອງລັດ Washington, ແຕ່ໃນກໍລະນີທີ່ມີການຮ້ອງຂໍດັ່ງກ່າວ, ກໍຈະມີ "ຂໍ້ຍົກເວັ້ນ" ຫຼາຍປະການ. ເວົ້າອີກຢ່າງໜຶ່ງ, ມີຫຼາຍປະເພດຂໍ້ມູນທີ່ສະມາຊິກຈາກສາທາລະນະຈະ**ບໍ່**ສາມາດເຂົ້າເຖິງໄດ້. ສິ່ງສຳຄັນ, OSPI ຈະ**ບໍ່**ສະໜອງຂໍ້ມູນຕໍ່ໄປນີ້ ເພື່ອເປັນການຕອບສະໜອງຕໍ່ຄຳຮ້ອງຂໍບັນທຶກສາທາລະນະ:

- ຂໍ້ມູນທີ່ມີການເຊື່ອມໂຍງກັນ ຫຼື ສາມາດເຊື່ອມໂຍງກັບນັກຮຽນສະເພາະຄົນໃດໜຶ່ງແບບເຈາະຈົງ ພຽງຢ່າງດຽວ ຫຼື ລວມກັນ ທີ່ຈະເຮັດໃຫ້ບຸກຄົນທີ່ສົມເຫດສົມຜົນໃນຊຸມຊົນໂຮງຮຽນ ທີ່ບໍ່ມີຄວາມຮູ້ສ່ວນຕົວກ່ຽວກັບສະຖານະການທີ່ກ່ຽວຂ້ອງ ສາມາດລະບຸຕົວຕົນນັກຮຽນໄດ້ດ້ວຍຄວາມແນ່ນອນທີ່ສົມເຫດສົມຜົນ. ຕົວຢ່າງ: ຂໍ້ມູນກ່ຽວກັບຄວາມພິການ ຫຼື ເຊື້ອຊາດ ແລະ ຊົນເຜົ່າຂອງລູກຂອງທ່ານ.
- ຂໍ້ມູນສ່ວນຕົວສຳລັບສະມາຊິກໃນຄອບຄົວ ຫຼື ຜູ້ປົກຄອງຂອງນັກຮຽນ ຖ້າຂໍ້ມູນດັ່ງກ່າວຈະສົ່ງຜົນໃຫ້ມີການເປີດເຜີຍຂໍ້ມູນສ່ວນຕົວຂອງນັກຮຽນ.
- ຂໍ້ມູນຕິດຕໍ່ສຸກເສີນຂອງສະມາຊິກຄອບຄົວ ຫຼື ຜູ້ປົກຄອງ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການຮ້ອງຂໍການບັນທຶກສາທາລະນະ, ກະລຸນາເບິ່ງແຫຼ່ງຂໍ້ມູນເຫຼົ່ານີ້:

- ຄຳຮ້ອງຂໍການບັນທຶກສາທາລະນະຂອງ OSPI
- ລະຫັດຍົກເວັ້ນບັນທຶກສາທາລະນະຂອງ OSPI
- ສຳນັກງານໄອຍະການແຫ່ງລັດ WA (WA Office of the Attorney General): ການໄດ້ຮັບບັນທຶກ